ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກໝາກເຂືອ



ຂຽນໂດຍ: ນາງນວນຈັນ

ຂໍ້ມູນຈາກ: ບ້ານທ້ອມ ເມືອງ ຫາດຊາຍຟອງ ນະຄອນຫລວງວຽງຈັນ

ປີ 2006

PDF created with pdfFactory Pro trial version www.pdffactory.com

## ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກໝາກເຂືອ

ຮີບໂຮມແລະຈັດໜ້າໂດຍ: ນາງ ຈັນທະຈອນ ຊຸມພິນພັກດີ

ແຕ້ມໂດຍ: ທ້າວ ສິດປະກອນ ທີ່ງອາມາດ

ຮຽບຮຽງໂດຍ: ອ ຈ ໂພໄຊຈັນທະວົງສາ

ອ.ຈ ເກດມະນີ ບັນດາລັກ

ອ.ຈ ຄຳໄຫວ ອິນທະວົງ

ອ.ຈ ລົ່ງ ແສງດາລາ

ອ.ຈ ທອງຂັນ ສີລີໂພຄຳ

ເຈົ້າຂອງ: ພະແນກສຶກສານະຄອນຫລວງ ແລະ

ສູນອົບຮົມຮ່ວມພັດທະນາ

PDF created with pdfFactory Pro trial version www.pdffactory.com

ຄຳນຳ

ປື້ມພູມປັນຍາທ້ອງຖິ່ນເຫຼັ້ມນີ້ ໄດ້ມາຈາກການຂຽນ ຂອງອາ ສາສະໝັກ ຊຶ່ງໄດ້ຮັບການຮຽບຮຽງເບື້ອງຕົ້ນຈາກຄະນະອຳນວນການ ສູນອົບຮົມຮ່ວມພັດທະນາ.

ປື້ມເຫຼັ້ມນ້ອຍໆນີ້ໄດ້ບັນຈຸເອົາເນື້ອໃນທີ່ເວົ້າເຖິງຫົວຂໍ້ໃດໜຶ່ງ ໂດຍມີຫຼາຍກິດຈະກຳທີ່ຈະເປັນການທົດລອງ ເອົາຄວາມຮູ້ທ້ອງຖິ່ນ ເຂົ້ານຳພາແລະສິດສອນນັກຮຽນຊັ້ນປະຖົມໂດຍເອົາບົດທີ່ງ່າຍສອນ ຊັ້ນ ປ. 1 ປໍ 2 ແລະ ບົດທີ່ຍາກກໍສອນຊັ້ນໃຫຍ່ຂຶ້ນໄປ.

ຄະນະຈັດທຳຄິດວ່າ ປື້ມເຫຼັ້ມນີ້ຄົງ ເປັນບ່ອນອີງອັນໜຶ່ງໃຫ້ ແກ່ຄູອາຈານກໍຄືອາສາສະໝັກ ທີ່ຈະໄປສອນເດັກປະຖົມບໍ່ຫຼາຍກໍ ໜ້ອຍ

ຄະນະຈັດທຳຄິດວ່າຍັງມີຫຼາຍບັນຫາທີ່ຍັງບໍ່ທັນພຽງພໍ ແລະ ຂາດໄປຫວັງວ່າຄົງໄດ້ຮັບອະໄພຈາກທຸກໆທ່ານພວກເຮົາພ້ອມທີ່ຈະ ປັບປຸ່ງນຕາມຄວາມເໝາະສົມ.

ຄະນະຈັດທຳ

PDF created with pdfFactory Pro trial version www.pdffactory.com

## <u>ຄວາມເປັນມາ</u>

:	ໝາກເຂືອເປັນພືດທີ່ເຮົາບໍລິໂພກໂດຍກົງກໍ່ໄດ້.ໃຊ້ປະກອບ ອາຫານ ແລະນຳປຸງແຕ່ງເປັນອາຫານໄດ້ຫຼາຍຊະນິດ.

+ **<u>ອຸປະກອນ</u>**

ແກ່ນໝາກເຂືອ







PDF created with pdfFactory Pro trial version www.pdffactory.com

ການກຽມດິນເຮັດໜານເພື່ອກ້າແກ່ນໝາກເຂືອ 4 ອາທິດກໍປູກໄດ້



+ **<u>ວິທີການປູກ</u>**

ຕ້ອງໄຖແລະຄາດດິນໃຫ້ລະອຽດ ຫຼັງຈາກນັ້ນກໍຫຼີກເບ້ຍມາປູກໃສ່ ແລ້ວຫົດນໍ້າຫຼັງຈາກປູກໄດ້ 2 ອາທິດ ເຮົາກໍຫົດນໍ້າໃສ່ຝຸ່ນ



PDF created with pdfFactory Pro trial version www.pdffactory.com

ຫຼັງຈາກນັ້ນປະມານ 3-4ອາທິດກໍຈະເລີ່ມອອກດອກກໍຈະເລີ່ມ
ອອກໝາກ



+ **<u>ຄຸນປະໂຫຍດ: :</u>**

ໝາກເຂືອມີຄຸນປະໂຫຍດຫຼາຍຢ່າງເຊັ່ນ: ໃສ່ປົ່ນ, ໃສ່ເອາະ,ເຮັດແຈ່ວ ແລະອື່ນໆ ເປັນສ່ວນປະກອບອາຫານໄດ້ຫຼາຍຢ່າງ ,ຖ້າປູກເປັນຈຳນວນຫຼາຍຈະສາມາດສົ່ງຂາຍໃນທ້ອງຕະຫຼາດເພື່ອສ້າງລາຍໄດ້ໃຫ້ ແກ່ຄອບຄົວ

ເຊີ້ງ: ການປູກໝາກເຂືອ

ເຮົາມາເຮົາມາ        ມາປູກໝາກເຂືອ
ປູກຫຼາຍບໍ່ເບື່ອ        ແຕ່ງກິນກໍໄດ້
ເຮົາຕ້ອງປູກໄວ້        ເພື່ອສົ່ງອອກຂາຍ
ປູກໃຫ້ມັນຫຼາຍ        ແຈກຢາຍພີ່ນ້ອງ
ມາສວຍແລ້ວຕ້ອງ        ປິດເອົາໝາກເຂືອ
ພ້ອມກັນເອົາເມືອ        ນຳໄປໃສ່ປົ່ນ

PDF created with pdfFactory Pro trial version www.pdffactory.com

ກາບ: ມັກປູກໝາກເຂືອ

| | |
|---|---|
| ຢູ່ບ້ານຂ້ອຍ | ມັກປູກໝາກເຂືອ |
| ນຳເອົາເມືອ | ໃສ່ປິ່ນກໍໄດ້ |
| ເອົາໄປໄວ້ | ເຮັດແຈ່ວກໍດີ |
| ຖ້າຢາກມີ | ຕ້ອງປູກໃຫ້ຫຼາຍ |

ເພງເ ມີໝາກເຂືອຫຼາຍຊະນິດ

| | |
|---|---|
| ຢູ່ບ້ານເຮົາ | ມີໝາກເຂືອຫຼາຍຊະນິດ |
| ແຕ່ຂ້ອຍກໍຄິດ | ຢາກຈະປູກໝາກເຂືອພວງ |
| ເວລາເຮົາປູກ | ມັນຈະອອກເປັນດອກດວງ (ຊ້ຳ) |
| ເບິ່ງແລ້ວເປັນພວງ | ໜ້າສະອອນເມືອໄດ້ເຫັນ |

ລຳ: ນ້ອງຢາກຈະປູກໝາກເຂືອ (ລຳເຕີ້ຍ)

| | |
|---|---|
| ນ້ອງຢາກ | ຈະປູກໝາກເຂືອ (ຊ້ຳ) |
| ແຕ່ວ່ານ້ອງນາງ | ຈະເຮັດຢ່າງໃດ |
| ຄິດແລ້ວ | ກໍຈິ່ງບອກໄປ |
| ວ່າໝາກເຂືອ | ນັ້ນມີ |
| ໝາກເຂືອຍາວ | ໝາກເຂືອປ້ອມ |
| ພໍຄິດນານແລ້ວ | ກໍມີຫຼາຍຊະນິດນັ້ນເອງ |
| ບາດວ່າຫລຽວ | ເບິ່ງນັ້ນ |
| ເຫັນພໍ່ແມ່ | ເພິ່ນປູກໃຫ້ເບິ່ງ |
| ຫຼຽວເບິ່ງຊິ່ງ | ຄືຊິເຮັດໄດ້ |
| ບາດໄປປູກ | ກໍລະແມ່ນເຮັດເປັນ |
| ໂອຍນັ້ນລະນາ | ໆກເຂືອເອີຍ |
| ຈັ່ງແມ່ນປູກງ່າຍ | ຫຼາຍເດ |

PDF created with pdfFactory Pro trial version www.pdffactory.com

## ຮູບແລະປະຫວັດຂອງຜູ້ຂຽນ



ຊື່ ນາງນວນຈັນ

ນາມສະກຸນ ຈິນທະວົງ

ອາຍຸ 40 ປີ

ອາຊີບ ພະນັກງານ

## ເປັນຫຍັງຈຶ່ງຢາກຂຽນຫົວຂໍ້ນີ້

ເພາະຢາກໃຫ້ເດັກນ້ອຍອະນຸຊົນໄດ້ຮູ້ເຖິງວິທີການປູກໝາກເຂືອໄປແຕ່ລະຂັ້ນຕອນແລະຮູ້ເຖິງການບົວລະບັດພ້ອມທັງໝາກເຂືອຍັງສາມາດມາປຸງແຕ່ງອາຫານໄດ້ຫຼາຍຢ່າງພ້ອມທັງເປັນການສ້າງລາຍໄດ້ໃຫ້ແກ່ຄອບຄົວ

PDF created with pdfFactory Pro trial version www.pdffactory.com